NSW GOVERNMENT

# Suspension factsheet: supporting your child's wellbeing

Parent/carer information

# ເຈ້ຍຂໍ້ມູນ ກ່ຽວກັບການສັ່ງພັກຮຽນ: ການສະໜັບສະໜູນຄວາມເປັນຢູ່ທີ່ດີຂອງລູກທ່ານ

## ເຈ້ຍຂໍ້ມູນສຳລັບພໍ່ແມ່/ຜູ້ດູແລ

### ຈະສະໜັບສະໜູນອູ້ມຊູລູກຂອງທ່ານຢ່າງໃດ

ບ່ອນທີ່ດີທີ່ຈະເລີ້ມຕົ້ນໃນເວລາທີ່ສະໜັບສະໜູນ ສຸຂະພາບແລະຄວາມເປັນຢູ່ທີ່ດີຂອງລູກຂອງທ່ານໃນລະຫວ່າງການ ຖືກສັ່ງພັກຮຽນ ແມ່ນການລວບລວມຂໍ້ມູນຜູ້ຊ່ຽວຊານແລະຄຳແນະນຳ. ສຳລັບຄຳແນະນຳພາກປະຕິບັດແລະຂໍ້ມູນເພື່ອສະໜັບສະໜູນຄວາມເປັນຢູ່ທີ່ດີຂອງລູກຂອງທ່ານ ຈົ່ງເບິ່ງແຫຼ່ງຂໍ້ມູນທີ່ຢູ່ໜ້າຕໍ່ໄປນີ້:

- ຄວາມເປັນຢູ່ທີ່ດີ (Wellbeing)

ການສື່ສານໃນທາງບວກແລະເປີດກວ້າງລະຫວ່າງເຮືອນແລະໂຮງຮຽນ ຊ່ວຍໃຫ້ນັກຮຽນມີໂອກາດທີ່ດີທີ່ສຸດທີ່ຈະປະສົບຜົນສຳເລັດ.

- ສ້າງຄວາມໝັ້ນໃຈໃຫ້ລູກຂອງທ່ານວ່າພວກເຂົາເປັນສະມາຊິກທີ່ມີຄຸນຄ່າຂອງຊຸມຊົນໂຮງຮຽນ.
- ແຈ້ງຄວາມກັງວົນໃດໆກັບໂຮງຮຽນ.
- ເຮັດວຽກຮ່ວມກັບທີມງານໂຮງຮຽນເພື່ອພັດທະນາ ແລະໃຊ້ຍຸດທະສາດທີ່ສະໜັບສະໜູນການມີສ່ວນຮ່ວມຂອງລູກໃນການຮຽນຮູ້.
- ເຂົ້າຮ່ວມກອງປະຊຸມວາງແຜນການກັບຄືນໄປຮຽນຂອງລູກຂອງທ່ານ. ອັນນີ້ອາດຈະເປັນທາງໜ້າຕໍ່ໜ້າ, ທາງອອນລາຍ ຫຼືທາງໂທລະສັບ ໃຊ້ຮູບແບບທີ່ຈະໃຫ້ໂອກາດທີ່ດີທີ່ສຸດຂອງການສົນທະນາໃນທາງບວກ.
- ເວົ້າລົມກັບລູກຂອງທ່ານກ່ຽວກັບຄວາມປະພຶດທີ່ ເໝາະສົມທີ່ສ້າງສະພາບແວດລ້ອມການຮຽນຮູ້ໃນທາງບວກ, ປອດໄພ, ແບບລວມແລະໃຫ້ຄວາມເຄົາລົບ.
- ຊຸກຍູ້ໃຫ້ລູກຂອງທ່ານແບ່ງປັນຄວາມຄິດ ແລະຄວາມຄິດເຫັນຂອງພວກເຂົາຢ່າງຈິງຈັງແລະດ້ວຍຄວາມເຄົາລົບ.

### ການຮຽນຮູ້ຈາກເຮືອນໃນຂະນະທີ່ຢູ່ໃນການສັ່ງພັກຮຽນ

- ສະມາຊິກຂອງພະນັກງານຈະຕິດຕໍ່ກັບທ່ານ ແລະ ລູກຂອງທ່ານເປັນປະຈຳໃນລະຫວ່າງໄລຍະເວລາຂອງການພັກຮຽນ.
- ຊ່ວຍໃຫ້ລູກຂອງທ່ານຮຽນຮູ້ໂດຍການກຳນົດເວລາທີ່ຊັດເຈນສຳລັບໄລຍະເວລາການເຮັດວຽກໃນລະຫວ່າງມື້, ຊອກຫາບ່ອນງຽບໆ, ແລະຖາມວ່າການຮຽນຮູ້ຂອງພວກເຂົາມີຄວາມຄືບຫນ້າແນວໃດ.
- ໃຫ້ແນ່ໃຈວ່າພວກເຂົາໄດ້ພັກຜ່ອນ, ດື່ມນ້ຳ ແລະສະໜັບສະໜູນພວກເຂົາຖ້າພວກເຂົາມີຄວາມເຄັ່ງຄຽດ ຫຼື ເປັນກັງວົນ.
- ໃຫ້ເວລາສຳລັບກິດຈະກຳທາງດ້ານຮ່າງກາຍ.
- ກຳກັບດູແລລູກຂອງທ່ານໃຫ້ໃຊ້ເຕັກໂນໂລຢີຢ່າງປອດໄພ. ເວັບໄຊທ໌ເລື່ອງການນຳໃຊ້ເຕັກໂນໂລຢີ (Using technology) ມີຂໍ້ມູນແລະຊັບພະຍາກອນຕ່າງໆທີ່ທ່ານອາດຈະເຫັນວ່າເປັນປະໂຫຍດ.

### ລິ້ງຕ່າງໆທີ່ເປັນປະໂຫຍດ

- ຊຸດການຮຽນຮູ້ (Learning packages)
- ຄຳແນະນຳການຮຽນຮູ້ ແລະການສະໜັບສະໜູນຄົນພິການ (Disability learning and support advice)
- ຊຸດເຄື່ອງມືຊ່ວຍເຫຼືອດ້ານຄວາມປະພຶດ: ການຊ່ວຍເຫຼືອສຳລັບພໍ່ແມ່ (Behaviour support toolkit: support for parents)
- ຊ່ວຍໃຫ້ລູກຂອງທ່ານຮຽນຮູ້ຈາກເຮືອນ (Helping your child learn from home)
- ສາຍ ຊ່ວຍເດັກ (Kids Helpline) ເປັນບໍລິການໃຫ້ຄຳປຶກສາທາງໂທລະສັບຟຣີອັນດຽວຂອງອອສເຕຣເລັຍສຳລັບຄົນໄວໜຸ່ມອາຍຸ 5 ຫາ 25 ປີ. ໂທຫາ ເບີ 1800 55 1800.

### ບໍລິການນາຍພາສາທາງໂທລະສັບ

ຖ້າທ່ານຕ້ອງການຕິດຕໍ່ກັບໂຮງຮຽນ ແລະຕ້ອງການຄວາມຊ່ວຍເຫຼືອດ້ານພາສາອັງກິດ ກະລຸນາໂທຫາບໍລິການນາຍພາສາທາງໂທລະສັບ ເບີ 131 450, ບອກພວກເຂົາວ່າທ່ານຕ້ອງການພາສາໃດ ແລະຂໍໃຫ້ຜູ້ຮັບສາຍໂທຫາໂຮງຮຽນ. ຜູ້ໂຮງຮຽນ. ຜູ້ຮັບສາຍຈະຊອກຫານາຍພາສາຢູ່ໃນສາຍເພື່ອຊ່ວຍທ່ານໃນການສົນທະນາຂອງທ່ານ. ທ່ານຈະບໍ່ຖືກເກັບຄ່າ ທ່ານ. ທ່ານຈະບໍ່ຖືກເກັບຄ່າບໍລິການນີ້.